# ບົດປາໄສ

## ຂອງພະນະທ່ານ ຈູມມາລີ ໄຊຍະສອນ, ປະທານປະເທດ
## ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ
## ກ່າວໃນງານລ້ຽງຮັບຮອງ ຈັດເປັນກຽດໂດຍ ພະນະທ່ານ ອະພິສິດ ເວດຊາຊີວະ,
## ນາຍົກລັດຖະມົນຕີ ແຫ່ງ ຣາຊະອານາຈັກໄທ
## ບາງກອກ, ວັນທີ 13 ພຶດສະພາ 2009

---

- ພະນະທ່ານ ອະພິສິດ ເວດຊາຊີວະ, ນາຍົກລັດຖະມົນຕີ ແຫ່ງ ຣາຊະອານາຈັກໄທ,
- ພະນະທ່ານ, ທ່ານຍິງ ແລະ ທ່ານຊາຍ ທີ່ມີກຽດທັງຫລາຍ.

ຂ້າພະເຈົ້າ ມີຄວາມປິຕິຊົມຊື່ນເປັນຢ່າງຍິ່ງ ທີ່ໄດ້ນຳພາຄະນະຜູ້ແທນຂັ້ນສູງຂອງ ສປປ ລາວ ມາຢ້ຽມຢາມ ທາງລັດຖະກິດ ຢູ່ຣາຊະອານາຈັກໄທ ໃນຖານະພະຣາດຊະອາຄັນຕຸກະ ໃນຄັ້ງນີ້. ພ້ອມກັນນີ້, ຂ້າພະເຈົ້າ ຂໍສະແດງຄວາມຂອບໃຈຢ່າງຈິງໃຈ ຕໍ່ ພະນະທ່ານ ອະພິສິດ ເວດຊາຊີວະ, ນາຍົກລັດຖະມົນຕີ ແຫ່ງ ຣາຊະອານາຈັກໄທ ທີ່ໄດ້ຈັດງານລ້ຽງຕ້ອນຮັບຢ່າງສະຫງ່າລາສີແດ່ຂ້າພະເຈົ້າ ພ້ອມດ້ວຍພັນລະຍາ ແລະຄະນະໃນຄ່ຳຄືນຂອງມື້ນີ້.

ປະຊາຊົນລາວ ແລະປະຊາຊົນໄທ ມີຄວາມສຳພັນຖານບ້ານໃກ້ເຮືອນຄຽງທີ່ດີຕໍ່ກັນມາແຕ່ບູຮານນະການ, ມີຮີດຄອງປະເພນີ, ວັດທະນະທຳ ແລະພາສາທີ່ຄ້າຍຄືກັນ. ໃນຫລາຍຍຸກຫລາຍສະໄຫມຜ່ານມາ ເຄີຍໄດ້ເພິ່ງພາອາໄສ ແລະຊ່ວຍເຫລືອເກື້ອກູນເຊິ່ງກັນແລະກັນ ໃນການດຳລົງຊີວິດ ກໍຄືໃນການປົກປັກຮັກສາ ແລະພັດທະນາປະເທດຊາດ. ສິ່ງເຫລົ່ານີ້ ໄດ້ຊ່ວຍໃຫ້ຄວາມສຳພັນລະຫວ່າງສອງປະເທດແໜ້ນແຟ້ນຍິ່ງຂຶ້ນເປັນລຳດັບຕໍ່ເນື່ອງກັນມາຈົນຮອດປະຈຸບັນ.

ລັດຖະບານລາວ ມີຄວາມຍິນດີຕໍ່ແນວທາງການຕ່າງປະເທດ ຂອງລັດຖະບານ ແຫ່ງຣາຊະອານາຈັກໄທ ທີ່ໃຫ້ຄວາມສຳຄັນສູງຕໍ່ການພົວພັນກັບປະເທດລາວຂອງພວກຂ້າພະເຈົ້າ ແລະ ກັບປະເທດເພື່ອນບ້ານໃກ້ຄຽງ ໂດຍໃຫ້ການຮ່ວມມືກັນຢ່າງສ້າງສັນ ແລະຕ່າງຝ່າຍຕ່າງມີຜົນປະໂຫຍດ.

ນອກນີ້, ລັດຖະບານລາວກໍມີຄວາມເພິ່ງພໍໃຈທີ່ລັດຖະບານທັງສອງ ໄດ້ສືບຕໍ່ນຳໃຊ້ກົນໄກຮ່ວມມືດ້ານຕ່າງໆ ໃຫ້ເກີດດອກອອກຜົນ ອັນໄດ້ເຮັດໃຫ້ສາຍພົວພັນ ລະຫວ່າງສອງປະເທດລາວ ແລະໄທໃນປະຈຸບັນ ແມ່ນຢູ່ສັນຕິສຸກດີ, ມີຄວາມສະຫງົບໂດຍພື້ນຖານ, ບໍ່ມີການໃຊ້ຄວາມຮຸນແຮງຕໍ່ກັນ, ມີຄວາມເຂົ້າອົກເຂົ້າໃຈກັນ, ມີຄວາມໄວ້ເນື້ອເຊື່ອໃຈຊຶ່ງກັນ ແລະກັນ. ລັດຖະບານທັງສອງ ໄດ້ຮ່ວມມືກັນແກ້ໄຂບັນຫາຄວາມຫມັ້ນຄົງ ເປັນຕົ້ນແມ່ນ ຄົນບໍ່ຫວັງດີຕໍ່ສາຍພົວພັນ

ລາວ-ໄທ, ມີການສຳຫຼວດ ແລະ ປັກຫຼັກໝາຍຊາຍແດນຢ່າງມີຜົນສຳເລັດມາຕາມລຳດັບ ແລະ ຂ້າພະເຈົ້າ ຫວັງວ່າ ການແກ້ໄຂບັນຫາຊາຍແດນທີ່ຍັງຄົງຄ້າງ ຈະສຳເລັດລົງຕາມກຳໜົດເວລາທີ່ ລັດຖະບານທັງສອງໄດ້ຕົກລົງກັນ.

ນອກນີ້ ການຮ່ວມມືດ້ານເສດຖະກິດ-ສັງຄົມ ກໍໄດ້ຂະຫຍາຍຕົວຢ່າງກວ້າງຂວາງ ກວມລວມເອົາຫລາຍຂົງເຂດອັນເປັນການເພີ່ມທະວີການຊ່ວຍເຫຼືອ ແລະ ການເພິ່ງພາອາໄສຊຶ່ງກັນ ແລະກັນ.

ສຳລັບຕົ້ນປີ 2009, ສາຍພົວພັນລະຫວ່າງ ສອງປະເທດ ກໍໄດ້ມີຂີດໝາຍໃໝ່ ໂດຍ ສົມເດັດພະເທບ ຣັດຊະສຸດາ ສະຫຍາມບໍຣົມຣາຊກຸມາຣີ ໄດ້ໃຫ້ກຽດສະເດັດຢ້ຽມຢາມ ສປປ ລາວ ແລະໃນໂອກາດດັ່ງກ່າວ ສົມເດັດ ກໍໄດ້ຊົງເປັນອົງປະທານຮ່ວມກັບ ພະນະທ່ານຮອງ ປະທານປະເທດ ແຫ່ງ ສປປ ລາວ ໃນພິທີເປີດໃຊ້ທາງລົດໄຟລາວ-ໄທ ຄັ້ງປະຫວັດສາດ ແລະ ການວາງສີລາເລີກສ້າງຂົວນ້ຳຂອງ ທ່າແຂກ-ນະຄອນພະນົມ.

ດ້ວຍຈິດມຸ່ງຫວັງຂອງສອງປະເທດ ບ້ານໃກ້ເຮືອນຄຽງ ທີ່ຢາກສືບຕໍ່ມີການພົວພັນອັນດີງາມ ຮ່ວມກັນ ແລະ ບົນພື້ນຖານໝາກຜົນຂອງການຮ່ວມມືດັ່ງທີ່ກ່າວມານັ້ນ, ຂ້າພະເຈົ້າຫວັງວ່າ ສາຍພົວພັນລະຫວ່າງສອງປະເທດຈະໄດ້ຮັບການພັດທະນາໃຫ້ແຕກດອກອອກຜົນຕໍ່ໄປ.

ພະນະທ່ານ, ທ່ານຍິງ ແລະທ່ານຊາຍ ທີ່ມີກຽດທັງຫລາຍ,

ຂ້າພະເຈົ້າ ມີຄວາມຍິນດີທີ່ເຫັນວ່າສາຍພົວພັນມິດຕະພາບ ແລະ ການຮ່ວມມື ຖານບ້ານ ໃກ້ເຮືອນຄຽງທີ່ດີດັ່ງກ່າວ ໄດ້ນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນ ສອງປະເທດພວກເຮົາ ແລະຫວັງວ່າ ການຢ້ຽມຢາມຂອງຂ້າພະເຈົ້າໃນຄັ້ງນີ້ຈະເປັນການປະກອບສ່ວນເຂົ້າໃນການຮັດ ແໜ້ນ ສາຍພົວພັນມິດຕະພາບ ແລະການຮ່ວມມືອັນດີງາມດັ່ງກ່າວ ໃຫ້ຈະເລີນງອກງາມຍິ່ງໆຂຶ້ນ.

ຂ້າພະເຈົ້າຂໍຖືໂອກາດນີ້ ຖວາຍພະພອນແດ່ ພະບາດສົມເດັດ ພະເຈົ້າມະຫາຊີວິດ ແລະ ພະລາຊິນີ ພ້ອມດ້ວຍ ພະບໍຣົມວົງສານຸວົງທຸກພະອົງ ຈົ່ງຊົງມີພະລະກະເສມສຳລານ ແລະມີພະ ຊົນມາຍຸຍິ່ງຍືນນານ;

- ຂໍອວຍພອນໄຊໃຫ້ ສາຍພົວພັນມິດຕະພາບ ແລະການຮ່ວມມືຖານບ້ານໃກ້ເຮືອນຄຽງ ລະຫວ່າງ ສອງປະເທດລາວ ແລະໄທ ຈົ່ງຈະເລີນງອກງາມຍິ່ງໆຂຶ້ນ.
- ຂໍອວຍພອນພະນະທ່ານ ນາຍົກລັດຖະມົນຕີ ອະພິສິດ ເວດຊາຊີວະ ພ້ອມດ້ວຍພັນລະຍາ ຈົ່ງ ມີສຸຂະພາບເຂັ້ມແຂງ ແລະມີຜົນສຳເລັດໃນໜ້າທີ່ການງານ.
- ຂໍອວຍພອນໃຫ້ບັນດາທ່ານແຂກຜູ້ມີກຽດຈົ່ງມີຄວາມຜາສຸກ. **ຂໍຂອບໃຈ !**

# Speech

by His Excellency Mr. Choummaly Sayasone,

President of the Lao People's Democratic Republic

at Offcial Reception hosted by His Excellency Mr. Abhisit Vejjajiva,

Prime Minister of the Kingdom of Thailand

Bangkok, May 13, 2009.

Your Excellency Mr. Abhisit Vejjajiva, Prime Minister of the Kingdom of Thailand,

Excellencies,

Distinguished Guests, Ladies and Gentlemen.

It is my great pleasure to lead the high level delegation of the Lao PDR for this State Visit to the Kingdom of Thailand as guests of His Majesty the King. I would also like to express my most sincere appreciation to His Excellency Mr. Abhisit Vejjajiva, Prime Minister of the Kingdom of Thailand for sumptuous Officail Reception in honour of myself, my wife and our delegation tonight.

The two peoples of the Lao PDR and the Kingdom of Thailand have enjoyed their sharing of long-lasting historical relations and good neighborliness. Likewise, we also share similar relations, culture and language. Throughout different periods in our history, the two peoples have been bound by the common desire for our national progress and prosperity, lending each other a hand at times in need, all of which have ensured the strengthening of our friendly relations and cooperation.

The Lao Government welcomes the foreign policy of the Royal Thai Government which attached great importance to enhancing the friendly ties with the Lao PDR and the neighboring countries based on constructive cooperation and mutual benefits.

Furthermore, the Lao government is pleased with the effective continued use of the existing bilateral cooperation mechanisms through which, the Lao PDR and the Kingdom of Thailand have enjoyed the friendly relations based on durable peace and stability, avoiding all confronting manner, deepening mutual trust and understanding. The two governments have closely cooperated to address the security issues such as interposition persons who aimed to undermine the friendly ties between the Lao PDR and Thailand, the border survey and demarcation whose progress in the implementation has been gradual, and in pursuance with the principles agreed upon by the two sides. I earnestly hope that the effort to resolve the pending border issues will be completed as scheduled.

In socio-economic front, cooperation has also been strengthened covering various fields susceptible to enhancing mutual assistance and support.

In the first quarter of 2009, our bilateral relations has been marked with a new milestone upon the visit to the Lao PDR by Her Royal Highness Princess Maha Chakri Sirindhorn and on the same occasion Her Royal Highness Princess and His Excellency the Vice President of the Lao PDR kindly presided over the historical inauguration of the Lao-Thai Railway link as well as the Cornerstone-laying Ceremony for the 3rd Lao-Thai Friendship Bridge between Tha Khek and Nakorn Pranom.

Based on the common desire of two neighboring countries for deepening the existing ties and the aforesaid fruitful cooperation, I am confident that the relations between our two countries will continue to flourish.

Excellencies, Distinguished Guests, Ladies and Gentlemen.

I am delighted to note that the friendly relations and cooperation between our two neighboring countries have brought about tangible benefits for our peoples and I believe that my State Visit this time will contribute to further strengthening the good friendly relations and cooperation.

May I take this opportunity to extend my best wishes for the happiness and long-live of His Majesty King Bhumibol Adulyadej and Her Majesty the Queen Sirikit as well as to all members of the Royal family;

- May I wish the neighboring friendly relations and cooperation between our two countries the Lao PDR and the Kingdom of Thailand to continue to flourish.
- May I also wish Prime Minister Abhisit Vejjajiva and Spouse a very good health and greater success in your noble duties.
- I wish all Distinguished Guests happiness and prosperity.

I Thank You.